**Curriculum on Basic Skills in legal profession**
**for enforcement and court judgement (Laos)**

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 13
## International cooperation in the enforcement and court judgement
## ການຮ່ວມມືສາກົນກ່ຽວກັບການປະຕິບັດຄຳຕັດສິນຂອງສານ

### 1. ການຮ່ວມມືສາກົນກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໂດຍໄດ້ຮັບການຢັ້ງຢືນຈາກສານປະຊາຊົນ ຂອງ ສປປ ລາວ ສານປະຊາຊົນຂອງ ສປປ ລາວ ຈະພິຈາລະນາຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ກໍຕໍ່ເມື່ອມີເງື່ອນໄຂຄົບຖ້ວນ ດັ່ງນີ້:

- ຄູ່ກໍລະນີຕ້ອງຖືສັນຊາດຂອງປະເທດ ທີ່ເປັນພາຄີຂອງສົນທິສັນຍານິວຢອກ ປີ 1958 ວ່າດ້ວຍການຮັບຮູ້ ແລະ ບັງຄັບປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ;
- ບໍ່ຂັດກັບລັດຖະທຳມະນູນ ແລະ ລະບຽບກົດໝາຍກ່ຽວກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ;
- ຄູ່ກໍລະນີຝ່າຍທີ່ມີພັນທະໃຊ້ແທນໜີ້ສິນ ມີຊັບສິນ, ກິດຈະການ, ຮຸ້ນ, ເງິນຝາກ ຫຼື ຊັບສິນອື່ນຢູ່ ສປປ ລາວ ພາຍຫຼັງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໄດ້ຖືກຮັບຮອງ ແລະ ຢັ້ງຢືນຈາກສານປະຊາຊົນຂອງ ສປປ ລາວ ແລ້ວ ກໍໃຫ້ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ ຕາມກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງ ສປປ ລາວ.

ນອກຈາກນີ້, ການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ  ແມ່ນຕ້ອງຜ່ານສະຖານທູດ, ກົງສຸນ ຫຼື ອົງການຕາງໜ້າ ຂອງສປປ ລາວ ຢູ່ຕ່າງປະເທດ ແລະ ໄດ້ແປເປັນພາສາລາວແລ້ວ ສານແຫ່ງ ສປປ ລາວ ຈະພິຈາລະນາຕັດສິນຮັບຮູ້ໃນກໍລະນີດັ່ງ:

- ຄຳຕັດສິນຂອງປະເທດທີ່ເປັນພາຄີຂອງສົນທິສັນຍາສາກົນ ຊຶ່ງສປປ ລາວ ໄດ້ເປັນພາຄີ;
- ຄຳຕັດສິນນັ້ນ ບໍ່ແຕະຕ້ອງເຖິງອະທິປະໄຕ ແລະ ບໍ່ຂັດກັບກົດໝາຍຂອງ ສປປ ລາວ;
- ຄຳຕັດສິນນັ້ນ ບໍ່ແຕະຕ້ອງເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມລາວ.

ການຮັບຮູ້ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ກໍໃຫ້ປະຕິບັດດັ່ງດຽວກັນກັບການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ. [1]

ຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ຄຳຕັດສິນຂອງສານຕ່າງປະເທດ ແລະ ນຳມາຈັດຕັ້ງປະຕິບັດໃນ ສປປ ລາວ ຕ້ອງຍື່ນຜ່ານກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ກະ ຊວງຍຸຕິທຳ ພິຈາລະນາກວດກາກ່ອນການສະ ເໜີຕໍ່ສານປະຊາຊົນສູງສຸດ ເພື່ອສັ່ງໃຫ້ສານທີ່ມີສິດອຳນາດພິຈາລະນາຕາມລະບຽບກົດໝາຍ.

ຄຳຮ້ອງຂໍເພື່ອໃຫ້ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຕ້ອງປະກອບດ້ວຍເນື້ອໃນ ຕົ້ນຕໍດັ່ງນີ້:

- ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ;
- ຊື່, ນາມສະກຸນ ແລະ ທີ່ຢູ່ໃນ ສປປ ລາວ ຂອງບຸກຄົນທີ່ເສຍຄະດີ ຕາມຄຳຕັດສິນຂອງສານຕ່າງປະເທດ;
- ຄຳຮ້ອງຂໍ ທີ່ບົ່ງບອກຈຳນວນໜີ້ສິນ, ຊັບສິນທີ່ຍັງຄ້າງປະຕິບັດ;

---

[1] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງ 2012, ມາດຕາ 362

- ລາຍເຊັນຂອງຜູ້ຮ້ອງຂໍ.

ຄຳຮ້ອງຂໍ ຕ້ອງແປເປັນພາສາລາວ ທີ່ມີການຢັ້ງຢືນຄວາມຖືກຕ້ອງ ຈາກສຳນັກງານທະບຽນສານ.

ຄ່າໃຊ້ຈ່າຍ ກ່ຽວກັບການດຳເນີນຄະດີ ໃນກໍລະນີນີ້ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຄ່າທຳນຽມສານ[2].

ເອກະສານທີ່ຄັດຕິດມານຳຄຳຮ້ອງຂໍຕ້ອງປະກອບດ້ວຍ:

- ຄຳຕັດສິນຂອງສານຕ່າງປະເທດທີ່ກ່ຽວຂ້ອງ;
- ໜັງສືຢັ້ງຢືນຂອງສານຕ່າງປະເທດ ທີ່ກ່ຽວຂ້ອງວ່າຄຳຕັດສິນດັ່ງກ່າວໃຊ້ໄດ້ຢ່າງເດັດຂາດ;
- ສົນທິສັນຍາສາກົນ ທີ່ກ່ຽວຂ້ອງ ຊຶ່ງ ສປປ ລາວ ເປັນພາຄີ;
- ເອກະສານອື່ນໆ ທີ່ກ່ຽວຂ້ອງ.

ເອກະສານດັ່ງກ່າວ ຕ້ອງໄດ້ແປເປັນພາສາລາວ ໂດຍການຢັ້ງຢືນຄວາມຖືກຕ້ອງຈາກສຳນັກງານທະບຽນສານ[3].

ຂັ້ນຕອນການພິຈາລະນາ: ເມື່ອໄດ້ຮັບຄຳຮ້ອງຂໍ ໃຫ້ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດແລ້ວ ສານທີ່ກ່ຽວຂ້ອງ ຂອງ ສປປ ລາວ ຕ້ອງນຳເອົາເອກະສານ ມາປະກອບເປັນສຳນວນຄະດີ ແລະ ຂຶ້ນຝ້ອງ ແລ້ວມອບໃຫ້ຜູ້ພິພາກສາເປັນຜູ້ຄົ້ນຄ້ວາ.

ສານ ຕ້ອງຮຽກຜູ້ເສັຍຄະດີ ຕາມຄຳຕັດສິນຂອງສານຕ່າງປະເທດ ທີ່ອາໃສຢູ່ ໃນ ສປປ ລາວ ມາຮັບຊາບ ແລະ ຊີ້ແຈງຕໍ່ສານ.

ສານ ຕ້ອງນຳເອົາຄະດີດັ່ງກ່າວ ອອກພິຈາລະນາຕັດສິນ ພາຍໃນກຳນົດເວລາ ບໍ່ໃຫ້ກາຍ ສາມສິບວັນ, ຕ້ອງເຊີນຫົວໜ້າອົງການໄອຍະການປະຊາຊົນຂັ້ນຕົ້ນ ເຂົ້າຮ່ວມໃນການພິຈາລະນາບັນຫາດັ່ງກ່າວ[4] ຄຳຕັດສິນຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ, ສານອາດຈະພິຈາລະນາຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສິນ ຂອງສານຕ່າງປະເທດທີ່ຮ້ອງຂໍມາ.

ການແຈ້ງການຮັບຮູ້ ຫຼື ການບໍ່ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ເມື່ອສານແຫ່ງ ສປປ ລາວ ໄດ້ພິຈາລະນາຕັດສິນຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດແລ້ວ ສານດັ່ງກ່າວ ຕ້ອງສົ່ງຄຳຕັດສິນໃຫ້ແກ່ຄູ່ຄວາມ ແລະ ຫົວໜ້າອົງການໄອຍະການປະຊາຊົນ ເພື່ອຊາບ. ໃນກໍລະນີ ທີ່ຄູ່ຄວາມຫາກຢູ່ຕ່າງປະເທດ ສານກໍ່ຈະສົ່ງຄຳຕັດສິນດັ່ງກ່າວຜ່ານກະຊວງຍຸຕິທຳ ເພື່ອດຳເນີນຕາມລະບຽບການ[5].

### 2. ເງື່ອນໄຂການຮັບຄຳຕັດສິນຂອງສານຕ່າງປະເທດ

ການຮັບຄຳຕັດສິນຂອງສານຕ່າງປະເທດມາຈັດຕັ້ງປະຕິບັດ ແມ່ນປະຕິບັດຕາມເງື່ອນໄຂດັ່ງນີ້:

ຄຳຕັດສິນຂອງສານຕ່າງປະເທດທີ່ສົ່ງມາຫາກະຊວງຍຸຕິທຳ ໂດຍຜ່ານສະຖານທູດ, ກົງສູນ ຫຼື ອົງການຕາງໜ້າຂອງ ສປປ ລາວຢູ່ຕ່າງປະເທດກ່ຽວຂ້ອງນັ້ນ ແລະ ໄດ້ແປເປັນພາສາລາວແລ້ວ;

ບຸກຄົນ, ຄູ່ຄວາມ ຫຼື ການຈັດຕັ້ງກ່ຽວຂ້ອງ ທີ່ຕ້ອງການໃຫ້ປະຕິບັດຄຳຕັດສິນຂອງສານຕ່າງປະເທດຕ້ອງຂຽນຄຳຮ້ອງຂໍໃຫ້ຮັບຮູ້ ແລະ ໃຫ້ປະຕິບັດ ໄປຍັງສານປະຊາຊົນຂອງ ສປປ ລາວ ບ່ອນທີ່ມີສິດອຳນາດ ເພື່ອພິຈາລະນາຕັດສິນຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ໂດຍຜ່ານກະຊວງການຕ່າງປະເທດ ສະເໜີມາຍັງກະຊວງຍຸຕິທຳ ເພື່ອຄົ້ນຄວ້າມີຄຳເຫັນ ແລ້ວຈຶ່ງສົ່ງໃຫ້ສານພິຈາລະນາຕາມລະບຽບການ.

ພາຍຫຼັງທີ່ສານປະຊາຊົນຂອງ ສປປ ລາວ ໄດ້ຕັດສິນຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນຕ່າງປະເທດແລ້ວ ບຸກຄົນ, ຄູ່ຄວາມ ຫຼື ການຈັດຕັ້ງກ່ຽວຂ້ອງ ຕ້ອງປະກອບເອກະສານມາຍັງກະຊວງຍຸຕິທຳດັ່ງນີ້:

---

[2] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 363

[3] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 364

[4] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ມາດຕາ 365

[5] ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012, ຕາມມາດຕາ 367

- ມີໃບຢັ້ງຢືນເຖິງຕົວຕົນ ແລະ ທີ່ຢູ່ປັດຈຸບັນຂອງຜູ້ຖືກປະຕິບັດຄຳຕັດສິນຢູ່ ສປປ ລາວ ຈາກອົງການປົກ ຄອງທີ່ກ່ຽວຂ້ອງ;
- ມີຄຳຕັດສິນຮັບຮູ້ຕາມຄຳຕັດສິນ ຫຼື ຄຳພິພາກສາ ຫຼື ຄຳຊີ້ຂາດທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາ ຊົນຂອງ ສປປ ລາວ ແລະ ເອກະສານອື່ນໆ ທີ່ເປັນຂໍ້ມູນກ່ຽວຂ້ອງໃນຄຳຕັດສິນຂອງສານຕ່າງປະເທດ ສົ່ງມາໃຫ້ອົງການຈັດ ຕັ້ງປະຕິບັດຄຳຕັດສິນຂອງສານບ່ອນກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດ.

ການດຳເນີນຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ່າງປະເທດ ຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຂອງ ສປປ ລາວ ໃຫ້ປະຕິບັດຄືກັນກັບການປະຕິບັດຄຳຕັດສິນຂອງສານປະຊາຊົນຂອງ ສປປ ລາວ, ການປະຕິບັດຄຳຕັດສິນຂອງສານຕ່າງປະເທດທີ່ມີຄວາມຫຍຸ້ງຍາກ ກໍໃຫ້ລາຍງານຂໍທິດຊີ້ນຳຈາກກະຊວງຍຸຕິທຳ (ກົມຄຸ້ມຄອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ) ໃນແຕ່ລະໄລຍະ;

ຄ່າໃຊ້ຈ່າຍຕ່າງໆໃນການປະຕິບັດຄຳຕັດສິນຂອງສານ ເປັນຕົ້ນ ຄ່າສົ່ງໝາຍຮຽກ, ສົ່ງເອກະສານ, ຄ່າໃຊ້ ຈ່າຍໃຫ້ແກ່ຜູ້ເຂົ້າຮ່ວມການຈັດຕັ້ງປະຕິບັດຄຳຕັດສິນ, ຄ່າໃຊ້ຈ່າຍໃນການປະກາດຂາຍຊັບ, ຄ່າສຳເນົາເອກະສານ ແລະ ອື່ນໆ ແມ່ນເປັນຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນທີ່ກຳນົດໃນຄຳຕັດສິນຂອງສານຕ່າງປະເທດ (ຖ້າມີ) ຫຼື ກໍລະນີຄຳຕັດສິນດັ່ງກ່າວບໍ່ໄດ້ລະບຸຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການປະຕິບັດ ແມ່ນໃຫ້ເປັນຄວາມຮັບຜິດຊອບຂອງຜູ້ຊະນະຄະດີຈ່າຍກ່ອນ ຕາມທີ່ກຳນົດຢູ່ໃນຄຳແນະນຳສະບັບເລກທີ 446/ກຍ, ລົງວັນທີ 5 ເມສາ 2019 ກ່ຽວກັບວຽກງານການເງິນ, ການຮັບ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

ເງິນທີ່ເກັບໄດ້ຈາກການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ່າງປະເທດ ເພື່ອໃຊ້ແທນໜີ້ສິນ ຫຼື ຄ່າເສຍຫາຍທາງແພ່ງ ໃຫ້ຄືນຕ່າງປະເທດໃນຄະດີນັ້ນ, ຖ້າບໍ່ມີຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍໄປຮັບເອົາເງິນດັ່ງກ່າວ ແມ່ນໃຫ້ສົ່ງມາຍັງກະຊວງຍຸຕິທຳ ເພື່ອຈະໄດ້ສົ່ງຕໍ່ໃຫ້ຕ່າງປະເທດບ່ອນທີ່ຜູ້ຊະນະຄະດີຢູ່ ຕາມຂັ້ນຕອນຂອງກົດ ໝາຍ, ລະບຽບການ ແລະ ຫຼັກການຮ່ວມມືສາກົນຕໍ່ໄປ.

### 3. ການຮ່ວມມືໃນການປະຕິບັດຄຳຕັດສິນຂອງສານຄະດີແພ່ງ

ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ສະບັບປັບປຸງ), ເລກທີ 04/ສພຊ, ລົງວັນທີ 25 ກໍລະກົດ 2008, ມາດຕາ 5 ຂໍ້ທີ 9 ໄດ້ກຳນົດກ່ຽວກັບການຮ່ວມມືກັບຕ່າງປະເທດໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທາງແພ່ງ: ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຂອງສານຕ່າງປະເທດ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງສານປະ ຊາຊົນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຮັບຮູ້ ແລະ ໃຫ້ຈັດຕັ້ງປະຕິບັດ ແຕ່ກົດໝາຍສະບັບດັ່ງກ່າວນີ້ບໍ່ໄດ້ກຳນົດກ່ຽວກັບຂັ້ນຕອນໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ່າງປະເທດເປັນອັນລະອຽດ ແລະ ໃນຮ່າງກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ ທີ່ກຳລັງປັບປຸງ ແມ່ນໄດ້ມີການຍົກເອົາບັນຫາກ່ຽວກັບຄຳຕັດສິນຂອງສານຕ່າງປະເທດ, ຊຶ່ງໃນຄຳຕັດສິນທີ່ໃຊ້ໄດ້ຢ່າງດັດຂາດລວມເອົາ ຄຳຕັດສິນ ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ຫຼື ຄຳຕັດສິນຢັ້ງຢືນຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ແລະ ໄດ້ຍົກໃຫ້ເຫັນຄຳຕັດສິນທີ່ນຳມາຈັດຕັ້ງປະຕິບັດໄດ້ລວມເອົາຄຳຕັດສິນຂອງສານຕ່າງປະເທດ ທີ່ສານປະຊາຊົນ ແຫ່ງ ສປປ ລາວ ຕັດສິນຮັບຮູ້ ແລະ ໃຫ້ປະຕິບັດ, ຄຳຕັດສິນຢັ້ງຢືນຄຳຕັດສິນ ຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຕາມສົນທິສັນຍາລະຫວ່າງປະເທດ ທີ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມເປັນພາຄີ ແຕ່ເຖິງຢ່າງໃດກໍຕາມ, ນີ້ເປັນພຽງຂໍ້ກຳນົດທີ່ລະບຸໃນຮ່າງກົດໝາຍທີ່ກຳລັງປັບປຸງ ຊຶ່ງບໍ່ໄດ້ມີການຜັນຂະຫຍາຍຢ່າງລະອຽດກ່ຽວກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ່າງປະເທດເປັນອັນສະເພາະ, ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂອງ ສປປ ລາວ ມາດຕາ 362:

ການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງສານຕ່າງປະເທດໂດຍຜ່ານ ສະຖານທູດ, ກົງສູນ ຫຼື ອົງການຕາງໜ້າຂອງ ສປປ ລາວ ຢູ່ຕ່າງປະເທດ ແລະ ໄດ້ແປເປັນພາສາລາວແລ້ວ.

ສານແຫ່ງ ສປປ ລາວ ຈະພິຈາລະນາຕັດສິນຮັບຮູ້ໃນກໍລະນີ ດັ່ງນີ້:

- ຄຳຕັດສິນຂອງປະເທດທີ່ເປັນພາຄີຂອງສົນທິສັນຍາສາກົນ ຊຶ່ງ ສປປ ລາວໄດ້ເປັນພາຄີ;
- ຄຳຕັດສິນນັ້ນບໍ່ແຕະຕ້ອງເຖິງອະທິປະໄຕ ແລະ ບໍ່ຂັດກັບກົດໝາຍຂອງ ສປປ ລາວ;
- ຄຳຕັດສິນນັ້ນບໍ່ແຕະຕ້ອງເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມລາວ.

ການຮັບຮູ້ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ກໍ່ໃຫ້ປະຕິບັດເຊັ່ນດຽວກັນກັບການຮັບຮູ້ຄຳຕັດສິນ ຂອງສານຕ່າງປະເທດ.

ສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງຄະນະກຳມະການຕັດສິນ ຕ່າງປະເທດ, ສົນທິສັນຍາສະບັບນີ້ ໃຊ້ປະຕິບັດຕໍ່ການຮັບຮູ້ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານ ເສດຖະກິດ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດໃດໜຶ່ງທີ່ບໍ່ແມ່ນດິນແດນຂອງລັດ ທີ່ຖືກຮ້ອງຂໍໃຫ້ຮັບຮູ້ ແລະ ຈັດຕັ້ງ ປະຕິບັດ ແລະ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງບຸກຄົນ ຫຼື ນິຕິບຸກຄົນດ້ວຍກັນ, ສົນທິສັນຍາສະບັບນີ້ຍັງໃຊ້ປະຕິບັດ ຕໍ່ບັນດາຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ບໍ່ໄດ້ຖືວ່າແມ່ນຄຳຕັດສິນພາຍໃນຂອງລັດທີ່ຖືກຮ້ອງຂໍໃຫ້ມີການ ຮັບຮູ້ ແລະຈັດຕັ້ງປະຕິບັດນັ້ນ.ເມື່ອມີການລົງນາມ, ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ ຂອງສົນທິສັນຍາສະບັບນີ້ ຫຼື ເຮັດແຈ້ງການຕາມທີ່ລະບຸໄວ້ໃນມາດຕາ X ບົນພື້ນຖານການປະຕິບັດຕໍ່ກັນ ລັດໃດໜຶ່ງອາດຈະຖະແຫຼງວ່າ ສົນທິສັນຍາສະບັບນີ້ ຈະໃຊ້ປະຕິບັດສະເພາະຕໍ່ຄຳຕັດສິນ ທີ່ໄດ້ຕັດສິນຢູ່ດິນແດນຂອງລັດພາຄີອື່ນ, ລັດດັ່ງກ່າວອາດຈະ ຖະແຫຼງຄືກັນວ່າ ຈະປະຕິບັດສົນທິສັນຍາສະເພາະຕໍ່ຂໍ້ຂັດແຍ່ງ ທີ່ເກີດຂຶ້ນຈາກສາຍພົວພັນທາງດ້ານກົດໝາຍ, ສັນຍາ ຫຼື ນອກສັນຍາ ຊຶ່ງຖືວ່າເປັນສາຍພົວພັນທາງການຄ້າຕາມກົດໝາຍຂອງຊາດຕົນ.

ຄວາມຈຳເປັນໃນການເຂົ້າເປັນພາຄີ ຂອງ ສປປ ລາວ: ແຕ່ລະລັດພາຄີ ຈະຕ້ອງຮັບຮູ້ຄຳຕັດສິນຂໍ້ຂັດແຍ່ງທາງ ດ້ານເສດຖະກິດ ທີ່ມີຜົນສັກສິດວ່າ ມີຜົນຜູກມັດ ແລະ ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວຕາມລະບຽບການດຳເນີນງານ ຂອງດິນແດນບ່ອນທີ່ຈະນຳເອົາຄຳຕັດສິນໄປຈັດຕັ້ງປະຕິບັດໂດຍພາຍໃຕ້ເງື່ອນໄຂທີ່ໄດ້ກຳນົດໃນບັນດາມາດຕາຕໍ່ໄປນີ້, ຈະບໍ່ມີການວາງເງື່ອນໄຂທີ່ຫຍຸ້ງຍາກ ຫຼື ເກັບຄ່າທຳນຽມທີ່ສູງ ຫຼື ເກັບຄ່າໃຊ້ຈ່າຍໃນການຮັບຮູ້ ຫຼື ການຈັດຕັ້ງປະຕິ ບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ໄດ້ໃຊ້ສົນທິສັນຍາສະບັບນີ້ສູງເກີນກວ່າຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ ໃຊ້ໃນການຮັບຮູ້ ຫຼື ຈັດດຕັ້ງປະຕິບັດຄຳຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງລັດຕົນ.

ອີງຕາມບັນດາຂໍ້ກຳນົດຂ້າງເທິງ, ແລ້ວແຕ່ລະກໍລະນີຕົວຈິງ, ອົງການປະຕິບັດຄຳຕັດສິນຂອງສານຈະກຳນົດໄດ້ ວັນຄຳຕັດສິນ, ຄຳຕົກລົງທາງແພ່ງຂອງສານຕ່າງປະເທດ ແລະ ຄຳພິພາກສາຂອງກຳມະການຕັດສິນຕ່າງປະເທດມີຜົນ ສັກສິດທາງດ້ານກົດໝາຍ ແລະ ໄດ້ຮັບການປະຕິບັດຢູ່ ສປປ ລາວ.

ສະນັ້ນ, ຈຶ່ງສາມາດເວົ້າໄດ້ວ່າຄຳຕັດສິນ, ຄຳຕົກລົງທາງແພ່ງຂອງສານຕ່າງປະເທດ, ຄຳຕົກລົງຂອງກຳມະການ ຕັດສິນຕ່າງປະເທດໄດ້ຮັບການຮັບຮູ້ໂດຍສານແຫ່ງ ສປປ ລາວ ແລະ ໃຫ້ປະຕິບັດຢູ່ລາວ ພາຍຫຼັງໄດ້ພິຈາລະນາຕັດສິນ ຮັບຮູ້ຂອງສານແຫ່ງ ສປປ ລາວ ແລະໃຫ້ປະຕິບັດຄຳຕັດສິນ, ຄຳຕົກລົງຂອງສານຕ່າງປະເທດ, ຄຳພິພາກສາຂອງ ກຳມະການຕັດສິນຕ່າງປະເທດດັ່ງກ່າວນັ້ນມີຜົນສັກສິດທາງດ້ານກົດໝາຍ.

**4. ການປະຕິບັດຄຳຕັດສິນຂອງສານ ຕາມສົນທິສັນຍາການຮ່ວມມືທາງດ້ານຍຸຕິທຳ ລະຫວ່າງ ສປປ ລາວ ແລະ ສສ ຫວຽດນາມ**

1) ການຮັບຮູ້ ແລະ ການປະຕິບັດຄຳຕັດສິນ

ຄູ່ພາຄີໜຶ່ງຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງອີກຄູ່ພາຄີໜຶ່ງ ຢູ່ບົນດິນແດນຂອງປະເທດຕົນ ດັ່ງນີ້:

- ຄຳຕັດສິນຄະດີແພ່ງ ນັບທັງຄຳຕັດສິນຂອງສານກ່ຽວກັບແຮງງານ, ການແຕ່ງດອງ, ການສືບທອດມູນມໍລະດົກ ແລະ ຄຳຕັດສິນອື່ນໆ ທີ່ໄດ້ກຳນົດໄວ້ໃນສົນທິສັນຍາຂອງສອງຝ່າຍ.

- ຄຳຕັດສິນກ່ຽວກັບຊັບສິນບັດໃນຄະດີອາຍາ.

- ຄຳຕັດສິນຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຄູ່ພາຄີ.

2) ເງື່ອນໄຂການຮັບຮູ້ ແລະ ການປະຕິບັດຄຳຕັດສິນ

- ຄຳຕັດສິນມີຜົນສັກສິດທາງດ້ານກົດໝາຍ ຕາມກົດໝາຍຂອງຄູ່ພາຄີ ທີ່ໄດ້ຮັບການຮ້ອງຂໍ ແລະ ຕ້ອງປະຕິບັດຕາມກົດໝາຍຂອງຄູ່ພາຄີທີ່ໄດ້ອອກຄຳຕັດສິນນັ້ນ.

- ຄຳຕັດສິນອອກໂດຍອົງການທີ່ມີສິດອຳນາດ ຕາມທີ່ໄດ້ກຳນົດໄວ້ໃນສົນທິສັນຍາ ຫຼື ຕາມກົດໝາຍຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍໃຫ້ຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນນັ້ນ.

- ຄຳຕັດສິນທາງແພ່ງຂອງຄູ່ພາຄີທີ່ຮ້ອງຂໍ ທີ່ມີຜົນສັກສິດທາງກົດໝາຍ ຊຶ່ງບໍ່ຂັດກັບກົດໝາຍຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ຫຼື ຜ່ານມາຄູ່ພາຄີທີ່ໄດ້ຮັບການຮ້ອງຂໍບໍ່ເຄີຍຮັບເອົາຄຳຕັດສິນໃນຄະດີດຽວກັນນີ້ຈາກປະເທດທີ່ສາມມາປະຕິບັດ ຫຼື ວ່າໃນເວລາຮັບເອົາຄຳຕັດສິນມາປະຕິບັດນັ້ນ ສານຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ຍັງບໍ່ທັນຄີຍໄດ້ແກ້ໄຂ ຫຼື ພິຈາລະນາຕັດສິນຄະດີດຽວກັນນີ້ຈັກເທື່ອ.

- ຄຳຕັດສິນ ຊຶ່ງຄູ່ຄວາມມີພັນທະປະຕິບັດ ຫຼື ຜູ້ຕາງໜ້າຂອງຜູ້ກ່ຽວໄດ້ເຂົ້າຮ່ວມໃນການດຳເນີນຄະດີ ແລະ ຖືກຮັບປະກັນສິດໃນການຕໍ່ສູ້ຄະດີ.

- ຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ເຫັນວ່າການຮັບຮູ້ ແລະ ການປະຕິບັດຄຳຕັດສິນນັ້ນຈະບໍ່ສິ່ງຜົນເສຍຫາຍຕໍ່ອະທິປະໄຕ ແລະ ຄວາມປອດໄພຂອງຊາດ ຫຼື ບໍ່ຂັດກັບຫຼັກການພື້ນຖານຂອງກົດໝາຍຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ.

3) ເງື່ອນໄຂການຮັບຮູ້ ແລະ ການປະຕິບັດຄຳຕັດສິນຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ຄຳຕັດສິນຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະຖືກຮັບຮູ້ ແລະ ໃຫ້ປະຕິບັດໄດ້ກໍຕໍ່ເມື່ອນອກຈາກຮັບປະກັນເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2) ແລ້ວ ຍັງຈະຕ້ອງມີເງື່ອນໄຂຄົບຖ້ວນຕື່ມອີກຄື:

- ຄຳຕັດສິນຂອງສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ຕັດສິນໃນຂອບເຂດສິດຂອງຕົນ ແລະ ຕາມກົດໝາຍຂອງຄູ່ພາຄີ ໂດຍແມ່ນຄູ່ຄວາມໄດ້ຕົກລົງຄັດເລືອກເອົາກຳມະການຕັດສິນ ແລະ ບັນທຶກໄວ້ໃນຄຳຕົກລົງກ່ຽວກັບກຳມະການຕັດສິນນັ້ນ.

- ເອກະສານການຕົກລົງກ່ຽວກັບກຳມະການຕັດສິນນັ້ນ ມີຄຸນຄ່າທາງດ້ານກົດໝາຍ ຕາມກົດໝາຍຂອງຄູ່ພາຄີບ່ອນທີ່ໄດ້ຕັດສິນ, ຕ້ອງໄດ້ຖືກຮັບຮູ້ ແລະ ໄດ້ຮັບການປະຕິບັດ ຫຼື ຕາມກົດໝາຍຂອງຄູ່ພາຄີ ບ່ອນທີ່ຄູ່ຄວາມໄດ້ຕົກລົງຄັດເລືອກເອົາກຳມະການຕັດສິນຢ່າງຖືກຕ້ອງຕາມກົດໝາຍ.

- ບຸກຄົນ ແລະ ການຈັດຕັ້ງມີສິດ ແລະ ພັນທະ ປະຕິບັດຕາມຄຳຕັດສິນຂອງກຳມະການຕັດສິນທີ່ຖືກຕ້ອງຕາມກົດໝາຍ.

- ອົງປະກອບຂອງກຳມະການຕັດສິນ, ລະບຽບການ ແລະ ຂັ້ນຕອນໃນການແກ້ໄຂຂໍ້ຂັດແຍ່ງ ຢູ່ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງສອດຄ່ອງກັບການຕົກລົງກ່ຽວກັບການຄັດເລືອກກຳມະການຕັດສິນ ຫຼື ກົດໝາຍຂອງຄູ່ພາຄີ ບ່ອນທີ່ກຳມະການໄດ້ຕັດສິນ.

- ຄຳຕັດສິນຂອງກຳມະການ ແມ່ນຄຳຕັດສິນກ່ຽວກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງບໍ່ຂຶ້ນກັບສິດອຳນາດຕັດສິນ ແຕ່ສະເພາະຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍເທົ່ານັ້ນ.

4) ຄຳຮ້ອງຂໍໃຫ້ຮັບຮູ້ ແລະ ຂໍໃຫ້ປະຕິບັດຄຳຕັດສິນ

- ຄຳຮ້ອງຂໍໃຫ້ຮັບຮູ້ ແລະ ຂໍໃຫ້ປະຕິບັດຄຳຕັດສິນ ທີ່ຖືກຕ້ອງຕາມກົດໝາຍຂອງຄູ່ພາຄີ ທີ່ໄດ້ຕັດສິນ ຫຼື ຖືກຕ້ອງຕາມກົດໝາຍຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍໃຫ້ຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນດັ່ງກ່າວ ໃຫ້ສົ່ງໃຫ້ສານ ທີ່ມີສິດອຳນາດຕັດສິນຂໍ້ຂັດແຍ່ງເປັນຂັ້ນຕົ້ນ ຫຼື ອົງການຍຸຕິທຳທີ່ມີສິດອຳນາດປະຕິບັດຄຳຕັດສິນຂອງກຳມະການຕັດສິນ ອົງການຍຸຕິທຳນັ້ນ ຈະມອບສົ່ງຄຳຮ້ອງ ແລະ ເອກະສານທີ່ຈຳເປັນອື່ນໆ ໃຫ້ແກ່ອົງການທີ່ມີສິດອຳນາດ ຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ຕາມວິທີການທີ່ໄດ້ກຳນົດໄວ້ໃນສົນທິສັນຍາຂອງຄູ່ພາຄີ.

- ເອກະສານທີ່ຕິດຂັດໄປກັບຄຳຮ້ອງຂໍມີດັ່ງນີ້:

+ ຄຳຕັດສິນຕົ້ນສະບັບ ຫຼື ສະບັບສຳເນົາທີ່ຖືກຕ້ອງຕາມກົດໝາຍ ໃນກໍລະນີທີ່ຄຳຕັດສິນນັ້ນບໍ່ຈະແຈ້ງ ຕ້ອງມີໃບຢັ້ງຢືນຄວາມຖືກຕ້ອງກ່ຽວກັບເນື້ອໃນຂອງຄຳຕັດສິນທີ່ກຳລັງມີຜົນສັກສິດທາງດ້ານກົດໝາຍ ແລະ ຈະຕ້ອງໄດ້ຮັບການປະຕິບັດ.

+ ເອກະສານຢັ້ງຢືນກ່ຽວກັບການນຳໃຊ້ສິດໃນການຕໍ່ສູ້ຄະດີ ຂອງຄູ່ຄວາມຜູ້ທີ່ຈະຕ້ອງປະຕິບັດຄຳຕັດສິນ ຊຶ່ງຮັບປະກັນວ່າຖືກຕ້ອງຕາມກົດໝາຍຂອງຄູ່ພາຄີບ່ອນທີ່ໄດ້ຕັດສິນ.

+ ຄຳຮ້ອງ ແລະ ເອກະສານທີ່ຕິດຄັດໄປນຳກັນນັ້ນ ຕ້ອງແປເປັນພາສາຂອງຄູ່ພາຄີ ທີ່ໄດ້ຮັບການຮ້ອງຂໍໂດຍມີການຢັ້ງຢືນຄວາມຖືກຕ້ອງ.

- ສຳລັບການຂໍໃຫ້ຮັບຮູ້ ແລະ ໃຫ້ປະຕິບັດຄຳຕັດສິນ ຂອງກຳມະການຕັດສິນນັ້ນ ຍັງຈະໄດ້ສົ່ງຕົ້ນສະບັບ ຫຼື ສະບັບສຳເນົາ ຄຳຕົກລົງຂອງຄູ່ຄວາມກ່ຽວກັບກຳມະການຕັດສິນ ພ້ອມທັງສະບັບແປພາສາ ຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ໂດຍມີການຢັ້ງຢືນຄວາມຖືກຕ້ອງ.

5) ລະບຽບການຮັບຮູ້ ແລະ ປະຕິບັດຄຳຕັດສິນ

- ສານຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ ຈະໄດ້ພິຈາລະນາເພື່ອຮັບຮູ້ ແລະ ປະຕິບັດຄຳຕັດສິນ ຂອງຄູ່ພາຄີທີ່ຮ້ອງຂໍຕາມກົດໝາຍຂອງປະເທດຕົນ.

- ຄູ່ຄວາມທີ່ມີພັນທະປະຕິບັດຕາມຄຳຕັດສິນນັ້ນ ມີສິດຢື່ນຄຳສະເໜີຄັດຄ້ານ ການຮັບຮູ້ ແລະ ການປະຕິບັດຄຳຕັດສິນ ຖ້າວ່າກົດໝາຍຂອງຄູ່ພາຄີທີ່ໄດ້ຕັດສິນຄະດີນັ້ນ ຫາກອະນຸຍາດໃຫ້ໃຊ້ສິດດັ່ງກ່າວ.

- ຖ້າວ່າອົງການຍຸຕິທຳຂອງຄູ່ພາຄີທີ່ໄດ້ຕັດສິນນັ້ນ ມີຄຳສະເໜີເປັນລາຍລັກອັກສອນໃຫ້ໂຈະຊົ່ວຄາວ ຫຼື ຢຸດຕິການປະຕິບັດຄຳຕັດສິນ ອົງການຍຸຕິທຳຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍນັ້ນ ກໍຈະຕ້ອງໂຈະຊົ່ວຄາວ ຫຼື ຢຸດຕິການຮັບຮູ້ ແລະ ການປະຕິບັດຄຳຕັດສິນດັ່ງກ່າວ.

6) ການປະຕິບັດຄຳຕັດສິນ

- ການປະຕິບັດຄຳຕັດສິນ ແມ່ນໃຫ້ປະຕິບັດຕາມຄຳຕັດສິນຂອງຄູ່ພາຄີທີ່ໄດ້ຮັບຮູ້ ແລະ ປະຕິບັດຄຳຕັດສິນນັ້ນ.

- ການປະຕິບັດຄຳຕັດສິນຂອງຄູ່ພາຄີ ທີ່ໄດ້ຮັບການຮ້ອງຂໍຈະໄດ້ປະຕິບັດຕາມຂໍ້ 5) ອົງການທີ່ມີສິດອຳນາດປະຕິບັດຄຳຕັດສິນ ຈະປະຕິບັດແຕ່ຄຳຕັດສິນທີ່ມີຜົນສັກສິດທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ໃຫ້ດຳເນີນຄະດີ ແລະ ພິຈາລະນາຕັດສິນຄະດີນັ້ນຄືນໃໝ່.

7) ການມອບສິ່ງເງິນ ແລະ ຊັບສິນບັດຕາມຄຳຕັດສິນ

ຄູ່ພາຄີ ໃຫ້ຄຳໝັ້ນສັນຍາຕໍ່ກັນວ່າ ຈະຮັບປະກັນການມອບສິ່ງເງິນ ແລະ ຊັບສິນບັດທີ່ໄດ້ມາຈາກການປະຕິບັດຄຳຕັດສິນ ຕາມສົນທິສັນຍາທີ່ຄູ່ພາຄີໄດ້ລົງນາມກັນໄວ້ນັ້ນ ການສົ່ງມອບເງິນ ແລະ ຊັບສິນບັດດັ່ງກ່າວ ໃຫ້ປະຕິບັດຕາມກົດໝາຍຂອງຄູ່ພາຄີທີ່ໄດ້ຮັບການຮ້ອງຂໍ.

**References:**


1. ກົດໝາຍວ່າດ້ວຍ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ສະບັບເລກທີ 4/ສພຊ, ລົງວັນທີ 25 ກໍລະກົດ 2008;
2. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງປີ 2012;
3. ສົນທິສັນຍານິວຢອກ 1958 ວ່າດ້ວຍການຮັບຮູ້ການຈັດຕັ້ງປະຕິບັດຄຳຕັດສິນຂອງຄະນະກຳມະການຕັດສິນຕ່າງປະເທດ.
4. ສົນທິສັນຍາຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານຍຸຕິທຳກ່ຽວກັບທາງແພ່ງ ແລະ ອາຍາ ລະຫວ່າງ ສປປ ລາວ ແລະ ຫວຽດນາມ,ວັນທີ 6/7/1998;
5. ຄຳແນະນຳຂອງລັດຖະມົນຕີກະຊວງຍຸຕິທຳ, ສະບັບເລກທີ 446/ກຍ, ລົງວັນທີ 5 ເມສາ 2019 ກ່ຽວກັບວຽກງານການເງິນ, ການຮິບ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.